ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະຈັດຕັ້ງສູນກາງພັກ
ຫ້ອງການ

ເລກທີ.....146.../ຫກ
ນະຄອນຫຼວງວຽງຈັນ, ວັນທີ .01./.02../2023

# ແຈ້ງການປະມູນ

**ເຖິງ:** ບໍລິສັດ/ຮ້ານສ້ອມແປງແອ ທີ່ມີໃບອະນຸຍາດ, ໃບທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ.
**ເລື່ອງ:** ເຊີນເຂົ້າຮ່ວມປະມູນການຕິດຕັ້ງ ແລະ ສ້ອມແປງເຄື່ອງປັບອາກາດ (ແອເຢັນ) ຂອງຄະນະຈັດຕັ້ງສູນກາງພັກ ປະຈຳປີ 2023.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 30/ສພຊ,ລົງວັນທີ່ 2 ພະຈິກ 2017.
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບວຽກງານການປະມູນຈັດຊື້-ຈັດຈ້າງ ຂອງຄະນະຈັດຕັ້ງສູກາງພັກ ສະບັບເລກທີ 672/ຄຈສພ, ລົງວັນທີ 14/12/2022.
- ອີງຕາມຂໍ້ຕົກລົງ ວ່າດ້ວຍການອະນຸມັດເປີດການປະມູນຕິດຕັ້ງ ແລະ ສ້ອມແປງເຄື່ອງປັບອາກາດ(ແອເຢັນ) ຂອງຄະນະຈັດຕັ້ງສູນກາງພັກ ປະຈຳປີ 2023, ສະບັບເລກທີ 15/ຄຈສພ, ລົງວັນທີ 18/01/2023.

ຫ້ອງການຄະນະຈັດຕັ້ງສູນກາງພັກ ຂໍຖືເປັນກຽດແຈ້ງມາຍັງຮ້ານສ້ອມແປງແອຂອງທ່ານ ເຂົ້າຮ່ວມການປະມູນການຕິດຕັ້ງ ແລະ ສ້ອມແປງເຄື່ອງໄຟຟ້າປັບອາກາດ (ແອເຢັນ) ຂອງຄະນະຈັດຕັ້ງສູນກາງພັກ ປະຈຳປີ 2023. ຖ້າທ່ານມີຄວາມສົນໃຈຂໍເຊີນເຂົ້າມາຊື້ຊອງປະມູນທີ່ ຫ້ອງການຄະນະຈັດຕັ້ງສູນກາງພັກ ໃນໂມງລັດຖະການ, ລາຍລະອຽດຄືດັ່ງນີ້:

- ວັນທີ 06-13/02/2023 ມື້ຂາຍຊອງປະມູນ (ພະແນກບໍລິຫານ-ພິທີການ).
- ວັນທີ 23/02/2022 ເວລາ 09:00 ໂມງ ເປີດຊອງປະມູນ ສະຖານທີ່ ຫ້ອງປະຊຸມ ຊັ້ນ III ຄະນະຈັດຕັ້ງສູນກາງພັກ (ຫຼັກ 6).
- ລາຄາຊອງປະມູນ 500.000 ກີບ/ຊອງ (ຫ້າແສນກີບ ຕໍ່ໜຶ່ງຊອງ).

(ລາຍລະອຽດກ່ຽວກັບເງື່ອນໄຂ ແລະ ເອກະສານປະເມີນລາຄາໄດ້ຂັດຕິດຂັດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງຂໍ້ແຈ້ງມາຍັງ ບັນດາບໍລິສັດ ແລະ ຫ້າງຮ້ານຕ່າງໆ ເພື່ອຊາບດ້ວຍ.

**ຫົວໜ້າຫ້ອງການ**
**ຮອງປະທານຄະນະຮັບຜິດຊອບການປະມູນ**

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

ພູຂົງ ພິລາເພັດ

ປະສານພົວພັນວຽກ:
ສ/ຫ ແສງແກ້ວ ສີອຸໄທ 020 23403322
ສ/ຫ ໄຊຍະສອນ ອາລີ 020 22377998